ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 1088/ທລຍ
ວັນທີ 08 NOV 2016

# ບົດສະຫຼຸບ

## ປະຈຳເດືອນ ຕຸລາ 2016 ແລະ ແຜນວຽກເດືອນ ພະຈິກ 2016

**1. ວຽກງານທີ່ພົ້ນເດັ່ນໃນເດືອນ ຕຸລາ 2016 ມີດັ່ງນີ້:**

ຕະຫລອດໄລຍະເວລານຶ່ງເດືອນຜ່ານມາ ທລຍ ໄດ້ສຸມໃສ່ບັນດາໜ້າວຽກສຳຄັນ ທີ່ເປັນບຸລິມະສິດ ກ່ອນປິດໂຄງການ ທລຍ 2 ແລະ ເລີ່ມຈັດຕັ້ງປະຕິບັດ ທລຍ 3 ຢ່າງເປັນທາງການ ນັບແຕ່ ເດືອນມັງກອນ 2017 ເປັນຕົ້ນໄປ, ວຽກງານທີ່ພົ້ນເດັ່ນປະກອບມີ:

- ເອົາໃຈໃສ່ຕິດຕາມສັງລວມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານ ທລຍ 2 ທຸກກິດຈະກຳ ແລະ ການເບີກຈ່າຍງົບປະມານ ແມ່ນຕ້ອງສຳເລັດຕາມແຜນຢ່າງຊ້າສຸດແມ່ນບໍ່ໃຫ້ກາຍເດືອນ ທັນວາ ປີ 2016.
- ສະຫລຸບສັງລວມຜົນໄດ້ຮັບຕະຫລອດ 1 ປີ ກໍ່ຄືໄລຍະສຸດທ້າຍຂອງ ທລຍ 2 ເພື່ອປະກອບເຂົ້າໃນບົດລາຍງານປະຈຳສົກປີ 2015-2016 ສະບັບພາສາອັງກິດເພື່ອລາຍງານຕໍ່ບັນດາຜູ້ໃຫ້ທຶນ. ບົດລາຍງານດັ່ງກ່າວແມ່ນໄດ້ກວມເອົາບັນດາຕົວຊີ້ວັດຜົນໄດ້ຮັບໂຄງການ ແລະ ຂໍ້ມູນສຳຄັນຕ່າງໆກ່ຽວກັບຈັດຕັ້ງປະຕິບັດໂຄງການ ລວມທັງການເບີກຈ່າຍງົບປະມານ ໃນແຕ່ລະອົງປະກອບຂອງໂຄງການ.
- ຕິດຕາມການພັດທະນາລະບົບຖານຂໍ້ມູນຂອງ ທລຍ ໄລຍະ 3 ເພື່ອໃຫ້ສາມາດນຳໃຊ້ ທັນກັບການຈັດຕັ້ງປະຕິບັດວຽກງານຕົວຈິງ ຂອງແຕ່ລະວຽກງານ ເປັນຕົ້ນແມ່ນສາມາດຮັກສາຂໍ້ມູນທີ່ສຳຄັນຂອງການຈັດຕັ້ງປະຕິບັດໂຄງການ ທີ່ກ່ຽວຂ້ອງກັບຕົວຊີ້ວັດຜົນໄດ້ຮັບ ແລະ ຂໍ້ມູນສຳລັບບໍລິຫານໂຄງການ.
- ກະກຽມຄວາມພ້ອມຕ່າງໆທັງໜ້າວຽກ, ຂໍ້ມູນ ແລະ ການລາຍງານ ເພື່ອການມາກວດກາ ແລະ ປະເມີນຜົນຂອງບັນດາຜູ້ໃຫ້ທຶນ ກ່ອນປິດໂຄງການ ທລຍ 2 ແລະ ເລີ່ມຈັດຕັ້ງປະຕິບັດ ທລຍ 3 ໃຫ້ໄດ້ຮັບໝາກຜົນຫລາຍທີ່ສຸດ. ຈຸດປະສົງຂອງຜູ້ໃຫ້ທຶນແມ່ນມາຕິດຕາມຜົນການຈັດຕັ້ງປະຕິບັດຕົວຈິງ ເພື່ອປະກອບເຂົ້າໃນບົດລາຍງານປິດໂຄງການ ທລຍ 2, ພ້ອມທັງ ແນະນຳຫົວໜ້າທີມຄົນໃໝ່ຂອງທະນາຄານໂລກຜູ້ທີ່ມາຊີ້ນຳ

ວຽກງານ ທລຍ ໃຫ້ກັບຝ່າຍລັດຖະບານ; ໄປຄຽງຄູ່ກັບການປຶກສາຫາລືຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດຂອງ ທລຍ 3 ທີ່ໄດ້ຕົກລົງເຫັນດີໃນການຈັດຕັ້ງປະຕິບັດຕົວຈິງ.

## 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 2.1. ຮອບວຽນ 13 (ສົກປີ 2015-2016)

ການຈັດຕັ້ງປະຕິບັດ ຮອບວຽນ 13 ເຊິ່ງເປັນຮອບວຽນສຸດທ້າຍຂອງໂຄງການ ທລຍ ໄລຍະທີ 2 ທັງເປັນໄລຍະເຊື່ອມຕໍ່ລະຫວ່າງ ທລຍ ໄລຍະທີ 2 ແລະ ໄລຍະທີ 3 ແມ່ນມີຈຳນວນທັງໝົດ 505 ໂຄງການ[1] ທີ່ໄດ້ຮັບການຈັດຕັ້ງປະຕິບັດ, ມີຈຳນວນຫຼາຍກວ່າເຄິ່ງໜຶ່ງ ແມ່ນໂຄງການກ່ຽວຂ້ອງກັບຂະແໜງການສຶກສາ ແລະ ຖືວ່າເປັນບູລິມະສິດຫຼັກໃນ ຮອບວຽນ 13 ເພາະວຽກງານສຶກສາແມ່ນມີບົດບາດສຳຄັນໃນການລຶບລ້າງຄວາມທຸກຍາກ. ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບຈຳນວນ ໂຄງການຕາມແຕ່ລະຂະແໜງການແມ່ນມີດັ່ງລຸ່ມນີ້:

**ຕາຕະລາງ 1. ຈຳນວນໂຄງການທັງໝົດ ຕາມຂະແໜງການ ໃນ ຮອບວຽນ 13 (ສົກປີ 2015 - 2016)**

| ຂະແໜງການ | ຈຳນວນໂຄງການ |
|---|---|
| ຂະແໜງ ກະສິກຳ ແລະ ປ່າໄມ້ | 21 |
| ຂະແໜງ ສຶກສາ | 264 |
| ຂະແໜງ ພະລັງງານ ແລະ ບໍ່ແຮ່ | 1 |
| ຂະແໜງ ສາທາລະນະສຸກ | 34 |
| ຂະແໜງ ຄົມມະນາຄົມ | 72 |
| ຂະແໜງ ນ້ຳສະອາດ ແລະ ສຸຂະອະນາໄມ | 113 |
| **ລວມ** | **505** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 4 ຕຸລາ 2016*

### 2.2. ຮອບວຽນ 13 ( ສົກປີ 2015 – 2016 )

ສຳລັບຮອບວຽນ 13 (ສົກປີ 2015 - 2016) ມີຈຳນວນທັງໝົດ 505 ໂຄງການຍ່ອຍ ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 400 ໂຄງການເທົ່າກັບ 79.21% ໂຄງການທີ່ສຳເລັດກ່ວາ 50% ມີ 36 ໂຄງການເທົ່າກັບ 7.13%, ໂຄງການທີ່ສຳເລັດບໍ່ຮອດ 50% ມີ 16 ໂຄງການເທົ່າກັບ 3.17% ແລະ ມີ 53 ໂຄງການແມ່ນກຳລັງດຳເນີນການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນໂຄງການພາຍໃຕ້ທຶນສົມທົບຂອງລັດຖະບານ ງວດ 2 ຈຳນວນ 11 ຕື້ກີບ.

[1] ການລາຍງານຄັ້ງຜ່ານມາແມ່ນ 504 ໂຄງການ ຍ້ອນມີການດັດແກ້ກວດກາ ເປັນວ່າຂໍ້ມູນຕົວຈິງແມ່ນ 505 ໂຄງການ ແລະ ເປັນຂໍ້ມູນລ້າສຸດ ທີ່ຮັບຮອງໂດຍຜູ້ໃຫ້ທຶນ

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 13

| ແຂວງ | ຈຳນວນ ໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ແຂວງ ສະຫວັນນະເຂດ | 43 | 26 | 3 | 1 | 13 |
| ແຂວງ ສາລະວັນ | 28 | 18 | 5 | 1 | 4 |
| ແຂວງ ຊຽງຂວາງ | 27 | 20 | 0 | 0 | 7 |
| ແຂວງ ຜົ້ງສາລີ | 41 | 22 | 4 | 10 | 5 |
| ແຂວງ ຫລວງນ້ຳທາ | 20 | 16 | 0 | 0 | 4 |
| ແຂວງ ຫົວພັນ | 74 | 59 | 1 | 0 | 14 |
| ແຂວງ ຫຼວງພະບາງ | 75 | 64 | 7 | 2 | 2 |
| ແຂວງ ອຸດົມໄຊ | 109 | 105 | 2 | 2 | 0 |
| ແຂວງ ອັດຕະປື | 37 | 21 | 13 | 0 | 3 |
| ແຂວງ ເຊກອງ | 51 | 49 | 1 | 0 | 1 |
| **ລວມ** | **505** | **400** | **36** | **16** | **53** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 4 ພະຈິກ 2016.*

ຕາຕະລາງ 3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 13 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 21 | 19 | 0 | 1 | 1 |
| ຄົມມະນາຄົມ | 72 | 55 | 9 | 4 | 4 |
| ສາທາລະນະສຸກ | 34 | 27 | 2 | 1 | 4 |
| ສຶກສາ | 264 | 203 | 13 | 9 | 39 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 113 | 95 | 12 | 1 | 5 |
| ພະລັງງານ ແລະ ບໍ່ແຮ່ | 1 | 1 | 0 | 0 | 0 |
| ລວມ | **505** | **400** | **36** | **16** | **53** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 4 ພະຈິກ 2016*

ຕາຕະລາງ 4. ທຶນສົມທົບລັດຖະບານຮອບວຽນ 13

| ແຂວງ | ຈຳນວນ ໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ແຂວງ ສະຫວັນນະເຂດ | 6 | 3 | 0 | 0 | 3 |
| ແຂວງ ສາລະວັນ | 25 | 11 | 0 | 0 | 14 |

| | | | | | |
|---|---|---|---|---|---|
| ແຂວງ ຊຽງຂວາງ | 8 | 4 | 0 | 0 | 4 |
| ແຂວງ ຜົ້ງສາລີ | 11 | 7 | 0 | 2 | 2 |
| ແຂວງ ຫລວງນ້ຳທາ | 6 | 3 | 1 | 2 | 0 |
| ແຂວງ ຫົວພັນ | 7 | 3 | 0 | 0 | 4 |
| ແຂວງ ຫຼວງພະບາງ | 7 | 2 | 2 | 0 | 3 |
| ແຂວງ ອຸດົມໄຊ | 23 | 10 | 1 | 0 | 12 |
| ແຂວງ ອັດຕະປື | 3 | 2 | 0 | 0 | 1 |
| ແຂວງ ເຊກອງ | 14 | 7 | 0 | 0 | 7 |
| ລວມ | **110** | **52** | **4** | **4** | **50** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 4 ພະຈິກ 2016.*

**ຕາຕະລາງ 5. ທຶນສົມທົບລັດຖະບານຮອບວຽນ 13 (ແຍກຕາມຂະແໜງການ)**

| ຂະແໜງການ | ຈຳນວນ ໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ຂະແໜງ ກະສິກຳ ແລະ ປ່າໄມ້ | 2 | 1 | 0 | 0 | 1 |
| ຂະແໜງ ຄົມມະນາຄົມ | 79 | 36 | 2 | 3 | 38 |
| ຂະແໜງ ສາທາລະນະສຸກ | 5 | 2 | 0 | 0 | 3 |
| ຂະແໜງ ສຶກສາ | 7 | 4 | 0 | 0 | 3 |
| ຂະແໜງ ນ້ຳສະອາດ ແລະ ສຸຂະອະນາໄມ | 17 | 9 | 2 | 1 | 5 |
| **ລວມ** | **110** | **52** | **4** | **4** | **50** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 4 ພະຈິກ 2016.*

ໝາຍເຫດ: ໂຄງການພາຍໃຕ້ທຶນຂອງລັດຖະບານງວດ 2 (5 ຕື້ກີບ) ປີ 2016 ແມ່ນຢູ່ໃນໄລຍະຈັດຕັ້ງປະຕິບັດ ໃກ້ຈະສຳເລັດ ແລະ ກຳລັງກະກຽມເອກະສານ ເພື່ອຂໍເບີກຈ່າຍງົບປະມານ.

## 2.3. ຮອບວຽນ 11 ແລະ 10 ( ສົກປີ 2013 - 2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ຕຸລາ 2016 ມີຄວາມຄືບໜ້າດັ່ງນີ້: ມີ 1 ໂຄງການ ໃນຮອບວຽນ 10 ແລະ 2 ໂຄງການ ໃນຮອບວຽນ 11 ກ່ຽວຂ້ອງກັບການກໍ່ສ້າງຂົວອູ່ ຢູ່ແຂວງຫລວງນ້ຳທາ ມີຄວາມລ້າຊ້າ ຍ້ອນເປັນໂຄງການ ທົດລອງ ລະຫວ່າງ ທລຍ ແລະ ເຮວີຕາດ ທີ່ຕ້ອງໃຊ້ມາດຕະຖານສູງ ມາຮອດເດືອນຕຸລາ 2016 ຈາກການລາຍງານຂອງອຳນາດການປົກຄອງແຂວງ ແລະ ເມືອງ ເປັນວ່າມີຄວາມຄືບໜ້າ ແລະ ຈະເຮັດສຳເລັດໃນເດືອນທັນວາ 2016 ນີ້, ຊຶ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ໂຄງການທີ່ຫຼ້າຊ້າໃນຮອບວຽນ 10 ແລະ 11

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 10 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ນາແລ | ສະແກນ | ສະແກນ | 43 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ນາແລ | ພູຫຼວງ | ພູຫຼວງມີກຈີງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ລອງ | ບວກບໍ່ (ຈ່າໃໝ່ ) | ແສນຈູມ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 4 ພະຈິກ 2016.*

## 3. ງົບປະມານ ແລະ ການເບີກຈ່າຍສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສໍາລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ຕຸລາ 2016 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 100% ເທົ່າກັບ 61,114,300,917 ກີບ, ຮອບວຽນ 10 ເບີກຈ່າຍໄປແລ້ວ 79,125,251,302 ກີບ ເທົ່າກັບ 100% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈໍານວນ 77,212,429,889 ກີບ ຫລື ເທົ່າກັບ 99.7% ຂອງງົບປະມານທັງໝົດ ແລະ ສໍາລັບຮອບວຽນ 12 ງົບປະມານທັງໝົດ 83,079,593,194 ກີບ ເບີກຈ່າຍໄປແລ້ວ 82,828,273,064ກີບ, ສໍາລັບຮອບວຽນ 13 ໄດ້ເບີກຈ່າຍ ໄປແລ້ວ 64.3 % ຂອງງົບປະມານ ທັງໝົດ, ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 7. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2016)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 61,114,300,917 | 0 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 79,125,251,302 | 0 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 331 | 77,212,429,889 | 235,394,678 |
| ຮອບວຽນ 12 (2014-2015) | 438 | 83,079,593,194 | 438 | 82,828,273,064 | 251,320,130 |
| ຮອບວຽນ 13 ( 2015-2016) | 505 | 86,470,961,070[2] | 400 | 55,579,554,848 | 30,891,406,222 |
| ລວມ | 1,931 | 387,237,931,050 | 1,822 | 355,859,810,020 | 31,378,121,030 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ແລະ ພະແນກບໍລິຫານ-ການເງິນ, ທລຍ, 4 ພະຈິກ 2016.*

## 4. ວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ (LN)

[2] ຕົວເລກງົບປະມານດັ່ງກ່າວແມ່ນງົບປະມານ 450 ຈາກ 505 ໂຄງການຍ່ອຍທີ່ໄດ້ຮັບການອະນຸຍາດໃຫ້ຈັດຕັ້ງປະຕິບັດເນື່ອງຈາກໂຄງການແມ່ນຍັງຢູ່ໃນຂັ້ນຕອນການຈັດຊື້-ຈັດຈ້າງ ດັ່ງນັ້ນ ຈຶ່ງຍັງບໍ່ທັນໄດ້ບອກຈໍານວນ ແລະ ງົບປະມານໃສ່.

### 4.1.. ກິດຈະກຳປັບປຸງຊີວິດການເປັນຢູ່

#### 4.1.1. ການທ້ອນເງິນ

ຢູ່ໃນ 165 ບ້ານລວມທັງ 7 ເມືອງ ຂອງ 2 ແຂວງຄື ແຂວງ ສະຫວັນ ແລະ ແຂວງ ທີ່ວພັນ. ການທ້ອນເງິນກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນທັງຫມົດ 915 ກຸ່ມ ເປັນກຸ່ມເກົ່າ 696 ແລະ ໄດ້ຂະຫຍາຍເພີ່ມ 219 ກຸ່ມ ແລະ ລວມມີສະມາຊິກທັງຫົມດ 10,598 ຄົນ ເປັນຍິງ 9,180 ຄົນ ອີງຕາມການເຄື່ອນໄຫວລົງຕິດຕາມການທ້ອນເງິນ ປະຈຳເດືອນ 10 ປີ 2016 ເງິນຝາກທັງໝົດໃນປະຈຸບັນມີ: **804,235,000** ກີບ.

#### 4.1.2. ການປ່ອຍເງິນໃຫ້ສະມາຊິກກູ້ຢືມ ເດືອນ 10/2016

ການປ່ອຍເງິນໃຫ້ສະມາຊິກເພື່ອດຳເນີນກິດຈະກຳປັບປຸງຊີວິດການເປັນຢູ່ເຊັ່ນ: ການລ້ຽງສັດການປູກຝັງ ແລະ ຫັດຖະກຳຕ່ຳຫູກ ທີ່ເປັນການສ້າງລາຍຮັບໃຫ້ແກ່ສະມາຊິກ. ໃນເດືອນ 10 ປີ 2016 ທີ່ ໄດ້ປ່ອຍໃຫ້ 165 ບ້ານ, 696 ກຸ່ມ ບໍ່ລວມຈຳນວນທີ່ກຳລັງຂະຫຍາຍ 219 ກຸ່ມໃຫມ່ ລວມມີສະມາຊິກ 8,508 ຄົນ ເປັນຍິງ 7,327 ຄົນ ລວມເປັນເງິນ 2,746,291,444 ກີບ.

#### 4.1.3 ການສ້າງລາຍຮັບຂອງກຸ່ມ ກຊກ ໃນ 4 ເມືອງ

ການສ້າງລາຍຮັບໃນປະຈຸບັນມີ 4 ເມືອງເກົ່າທີ່ໄດ້ດຳເນີນກິດຈະກຳຂອງໂຄງການເຊັ່ນ ການລ້ຽງໄກ່, ການລ້ຽງປາ ,ການຕ່ຳຫູກ, ການລ້ຽງໝູ, ລ້ຽງແບ້ ແລະ ອື່ນໆ ທີ່ນອນໃນ 2 ແຂວງຄື ແຂວງ ສະຫວັນນະເຂດ ແລະ ແຂວງ ຫົວພັນລວມມີ 89 ບ້ານ, 323 ກຸ່ມ ມີສະມາຊິກ 4,893 ຄົນ ເປັນຍິງ 3,712 ຄົນ. ປະຈຸບັນມີລາຍຮັບຢູ່ທີ່ 3,838,184,500 ກີບ.

### 4.2 ວຽກງານດ້ານໂພຊະນາການ

ສະໂມສອນໂພຊະນາການແມ່ນກິດຈະກິດຈະກຳປຸງແຕ່ງອາຫານການງອັນໃຫ້ແກ່ແມ່ຍິງທີ່ກຳລັງຖືພາ, ໃຫ້ນົມລູກ ແລະ ເດັກນ້ອຍໃນລະຫວ່າງເກີດໃຫມ່ ຫາ 2 ປີ, ກິດຈະກຳດັ່ງກ່າວໄດ້ນຳໃຊ້ ງົບປະມານ ເພື່ອປຸງແຕ່ງອາຫານ ພາຍໃນ 7 ເມືອງ ລວມມີທັງຫມົດ 23 ສູນ ງົບປະມານທັງຫມົດ 1,388,257,000 ກີບ, ເງິນໃນບັນຊີ 455,344,810 ກີບ, ເງິນສົດ 66,649,417 ກີບ, ຈຳນວນເງິນທີ່ໄດ້ຈ່າຍ 514,487,500 ກີບ ແລະ ຈຳນວນເງິນທີ່ຫຍັງເຫລືອ 561,335,289 ກີບ.

#### 4.2.1 ວຽກງານດ້ານໂພຊະນາສຶກສາ

ວຽກງານດ້ານໂພຊະນາສຶກສາໄດ້ເຮັດພາຍໃນເດືອນ ມີຫົວຂໍ້ດັ່ງນີ້:

1. ໃຫ້ຄວາມຮູ້ກ່ຽວກັບໝວດອາຫານ
   - ຜັກທີ່ມີວິຕາມິນ (ປະເພດຜັກ)
   - ອາຫານທີ່ມີໂປຼຕີນ ແລະ ວິທີປຸງແຕ່ງ
   - ອາຫານຫຼັກທີ່ໃຫ້ພະລັງງານປະເພດທາດແປ້ງ
2. ສຸຂະອານາໄມ 3 ສະອາດ

3. ໃຫ້ການດູແລເດັກເກີດໃໝ່ ແລະ ດູແລໂຕເອງໃນໄລຍະແມ່ຫຼັງເກີດ

**4.2.2 ວຽກງານໂພຊະນາການ ແມ່ ແລະ ເດັກ**

1. ລົງເຄື່ອນໄຫວໂຄສະນາສຸຂະສຶກສາ ແລະ ໂພຊະນາສຶກສາທີ່ເຊື່ອມໂຍງກັບວຽກງານຊີວິດການເປັນຢູ່
2. ບໍລິການກວດທ້ອງແມ່ມານ (ໃຫ້ຢາທາດເຫຼັກ ອາຊິດຟູລິກ)
3. ກວດແມ່ຫຼັງເກີດ
4. ສັກຢາວັກຊີນໃຫ້ເດັກກຸ່ມເປົ້າໝາຍ
5. ໃຫ້ຢາຂ້າແມ່ທ້ອງສຳລັບເດັກກຸ່ມເປົ້າໝາຍ
6. ໃຫ້ຢາທາດ (ເຫຼັກອາຊິດຟູລິກ) ແກ່ແມ່ຍິງໄວຈະເລີນພັນ ອາຍຸ 12 - 45 ປີ

**4.3.3 ວຽກງານພັດທະນາສວນຄົວ**

1. ນໍາພາສະມາຊິກປູກຜັກໃສ່ສວນຄົວໃຫ້ໄດ້ຫລາຍຊະນິດ
2. ອະນາໄມບົວລະບັດສວນຄົວຢູ່ສະໂມສອນ

**5. ແຜນວຽກປະຈໍາເດືອນ ພະຈິກ 2016**

- ເຮັດວຽກກັບຜູ້ໃຫ້ທຶນ ກ່ຽວກັບການສະຫລຸບສັງລວມ ແລະ ຕີລາຄາຜົນໄດ້ຮັບ ທລຍ 2 ກ່ອນປິດໂຄງການ ແລະ ປຶກສາຫາລືການຈັດຕັ້ງປະຕິບັດໂຄງການ ທລຍ 3.
- ຕິດຕາມຄວາມຄືບໜ້າ ຂອງໂຄງການຍ່ອຍທັງໝົດລວມທັງການເບີກຈ່າຍຕ່າງໆເພື່ອຮັບປະກັນວ່າໂຄງການທັງໝົດ ແມ່ນສາມາດສຳເລັດ ກ່ອນປິດໄລຍະໂຄງການ ຢ່າງຊ້າສຸດບໍ່ໃຫ້ກາຍເດືອນ ທັນວາ 2016.
- ສືບຕໍ່ເຮັດວຽກຮ່ວມກັບບໍລິສັດທີ່ປຶກສາ ໃນການປັບປຸງຂໍ້ມູນຂອງ ທລຍ 3 ເພື່ອໃຫ້ສຳເລັດຕາມແຜນ ແລະ ສາມາດນໍາໃຊ້ທັນກັບເວລາ.
- ປັບປຸງບົດລາຍງານປະຈໍາປີ 2015 - 2016 ສະບັບພາສາອັງກິດ ເພື່ອລາຍງານຕໍ່ບັນດາຜູ້ໃຫ້ທຶນ ແລະ ລັດຖະບານ.
- ຈັດກອງປະຊຸມຖອດຖອນບົດຮຽນກ່ຽວກັບການວາງແຜນ ເສດຖະກິດສັງຄົມຂັ້ນເມືອງຮ່ວມກັບກະຊວງແຜນການ ການລົງທຶນ ພ້ອມທັງ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

<u>ຜູ້ອໍານວຍການບໍລິຫານ ທລຍ</u>

ຄ.ພ.ທ.ລ
ຜູ້ອໍານວຍການ
ບໍລິຫານ
ກອງທຶນຫຼຸດຜ່ອນຄວາມທຸກຍາກ



ບຸນກວ້າງ ສູວັນນະພັນ